Developed by the
Minnesota Department of Health,
Tuberculosis Prevention and Control Program
January 1997 phone: (612) 676-5414

This is one in a series of four patient education pamphlets that addresses TB to be used in various clinical situations.

# ໂຣກປອດແຫ້ງ

**Tuberculosis Disease, Lao**

ປອດແຫ້ງເປັນພຍາດທີ່ອັນຕະລາຍທີ່ສຸດ ທີ່ເກີດມາຈາກ ວັນນະໂຣກ ໂດຍຈະຂະຫຍາຍຕົວອອກ ຢູ່ໃນຮ່າງກາຍຂອງຄົນເຮົາ ແລະມັນກໍ ທຳລາຍເນື້ອເຍື່ອ ຕ່າງໆຂອງ ຮ່າງກາຍ ແລະ ມັນ ກໍມີ ຜົນກະທົບກະເທືອນເຖິງປອດ ຂອງທ່ານ ອີກ, ຕລອດເຖິງ ທຸກໆ ພາກສ່ວນຂອງຮ່າງກາຍ. ໂຣກປອ້ດແຫ້ງນີ້ ຫຼື ທີບີ ນີ້ຈະລະບາດຕໍ່ ຈາກຜູ້ນຶ່ງໄປຫາອີກຜູ້ນຶ່ງ ໂດຍທາງອາກາດຫາຍໃຈ.

> ໂຣກປອດແຫ້ງເກີດຈາກ
> ເຊື້ອໂຣກແລະແຜ່ຂະຫຍາຍ
> ຕົວຂື້ນໃນຮ່າງກາຍ

## ປະຕິກິຣິຍາ ຂອງພຍາດປອດແຫ້ງ

ຖ້າຫາກທ່ານມີເຊື້ອໂຣກນີ້ ຢູ່ໃນປອດຂອງທ່ານ, ທ່ານອາດຈະ:

- ໄອຫຼາຍ
- ໄອເປັນຂີ້ກະເຍີ
- ໄອອອກເປັນເລືອດ
- ເຈັບໜ້າເອິກໃນເວລາໄອ

ໃນເມື່ອເວລາ ທ່ານເປັນໂຣກປອດແຫ້ງ ຫຼືມີເຊື້ອໂຣກປອດແຫ້ງ ຢູ່ໃນປອດ ຫຼື ຢູ່ໃນອະວັຍະວະສ່ວນຕ່າງໆຂອງຮ່າງກາຍ, ທານອາດຈະມີອາການເຊັ່ນ:

- ນ້ຳໜັກ ລຸດລົງ
- ເປັນໃຂ້
- ມີເຫື່ອອອກໃນຕອນກາງຄືນ
- ເຈັບໃນບໍຣິເວນ ບ່ອນທີ່ມີພຍາດເກີດ

## ມີພຽງແຕ່ການກວດເທົ່ານັ້ນທີ່ສາມາດບອກໄດ້ວ່າທ່ານມີເຊື້ອໂຣກປອດຫຼືບໍ່

ຕ້ອງໄດ້ກວດ ຫຼາຍຢ່າງ ເພື່ອຈະໄດ້ຮູ້ຈັກແທ້ຈິງວ່າ ທ່ານມີພຍາດປອດແຫ້ງຫຼືບໍ່.

ການກວດທີ່ຜິວໜັງ *Mantoux* ເປັນວິທີດຽວທີ່ຈະຮູ້ໄດ້ວ່າທ່ານນັ້ນຕິດໂຣກປອດແຫ້ງ ຈາກການຫາຍໃຈເອົາເຊື້ອໂຣກເຂົ້າໄປທາງປອດ. ວິທີກວດນີ້ຄືທ່ານໝໍຈະໄດ້ສັກເຊື້ອຢາຊື່ວ່າ tuberculin ເຂົ້າຝັງໄວ້ທີ່ກ້ອງແຂນຂອງທ່ານ. ຫຼັງຈາກນັ້ນ ມັນກໍອາດຈະໄຄ່ ແລະມີປ່ານແດງເກີດຂື້ນ. ທ່ານຕ້ອງໄດ້ກັບຄືນໄປພົບທ່ານໝໍອີກຫຼັງຈາກສອງສາມວັນທີ່ໄດ້ສັກເຊື້ອຢານັ້ນເຂົ້າໄປເພື່ອທ່ານໝໍຈະໄດ້ເບິ່ງຜົນປະກົດຂອງມັນ. ເຖິງແມ່ນວ່າແຕ່ກ່ອນ ທ່ານເຄີຍໄດ້ສັກຢາປ້ອງກັນໄວ້ແລ້ວ ຄືຢາ BCG (Bacille Calmette-Guerin) ແຕ່ທ່ານກໍຍັງຈະຕ້ອງໄດ້ກວດວິທີນີ້ເໝືອນກັນ ເພາະວ່າການສັກຢາ BCG ຈະບໍ່ຊ່ອຍປ້ອງກັນໂຣກໄດ້ໝົດທຸກຊະນິດ. ແລະອີກຢ່າງນຶ່ງຢາທີ່ທ່ານສັກປ້ອງກັນໄວ້ຄືຢາ BCG ນັ້ນ ຈະບໍ່ທຳໃຫ້ເກີດມີປະຕິກິຣິຍາຫຍັງທີ່ຈະກະທົບກະເທືອນຕໍ່ການກວດທົດລອງໂຣກປອດແຫ້ງທີ່ຜິວໜັງແບບນີ້ Mantoux skin test.

ການສ່ອງໄຟຟ້າ ທີ່ໜ້າເອິກ ເປັນພຽງການກວດ ເພື່ອຈະໄດ້ຮູ້ວ່າ ເຊື້ອໂຣກນັ້ນ ໄດ້ທຳລາຍປອດຂອງທ່ານຫຼາຍເທົ່າໃດແລ້ວ.

ທ່ານອາດຈະໄດ້ຖືກສັ່ງໃຫ້ໄອອອກມາເປັນຂີ້ກະເທີ່ ເພື່ອຈະໄດ້ນຳເອົາມັນໄປວິໃຈກວດເບິ່ງວ່າເຊື້ອໂຣກນີ້ໄດ້ເຂົ້າໄປໃນປອດຂອງທ່ານແລ້ວຫຼືຍັງ.

## ການປ້ອງກັນ ເພື່ອບໍ່ໃຫ້ໂຣກປອດແຫ້ງ ແຜ່ລະບາດ ຕິດຕໍ່ໄປໃສ່ຜູ້ອື່ນ

ຖ້າຫາກທ່ານເກີດເປັນໂຣກປອດແຫ້ງ ທີ່ກໍ່ຕົວຂື້ນຢູ່ໃນປອດຂອງທ່ານແລ້ວ ທ່ານສາມາດທີ່ຈະແຜ່ລະບາດ ພຍາດນັ້ນໄປຕິດໃສ່ຜູ້ອື່ນໄດ້ ເຊື້ອໂຣກນີ້ຈະປິວອອກໄປ ໃນເມື່ອເວລາທ່ານໄອ, ຮ້ອງ, ຫຼື ຈາມ ຕ້ອງໃຊ້ເຈັ້ຍອະນາມັຍ ຫຼື ແພມືນປົກປິດປາກຂອງທ່ານໄວ້ ທຸກໆເວລາທີ່ທ່ານໄອ. ຜູ້ຄົນອື່ນໆທີ່ຢູ່ໃກ້ຄຽງທ່ານ ອາດຈະຫາຍໃຈ ເອົາເຊື້ອໂຣກປອດເຂົ້າໄປໃນປອດຂອງເພິ່ນ ນີ້ເອີ້ນວ່າ ການຕິດເຊື້ອໂຣກປອດແຫ້ງ. ຄົນເຫຼົ່ານັ້ນ ຄວນຈະໄດ້ຖືກກວດກາສຸຂະພາບຢ່າງຄັກແນ່ຈາກທ່ານໝໍ ເພື່ອຈະໄດ້ຮູ້ວ່າ ເພິ່ນນັ້ນຕິດເຊື້ອໂຣກແລ້ວຫຼືບໍ ຫຼັງຈາກນັ້ນທ່ານໝໍຈຶ່ງຈະໄດ້ສັ່ງຢາໃຫ້ຮັບປະທານ ເພື່ອຈະໄດ້ປ້ອງກັນແລະຄວບຄຸມ ໂຣກນີ້ໃຫ້ທັນເວລາ ແລະທ່ານຈະບໍ່ໄດ້ເຈັບປ່ວຍອີກຕໍ່ໄປໃນອານາຄົດ

ເຊື້ອໂຣກປອດນີ້ຈະບໍ່ແຜ່ລະບາດ ຕິດຕໍ່ນຳອາຫານ, ເຄື່ອງໃຊ້ໃນເຮືອນຄົວ, ແລະເຄື່ອງໃນຫ້ອງນອນຕ່າງໆ.

ຖ້າຫາກທ່ານມີເຊື້ອໂຣກປອດແຫ້ງ ທີ່ຝັງໄວ້ຢູ່ໃນພາກສ່ວນໃດສ່ວນນຶ່ງຂອງຮ່າງການ (ແຕ່ບໍ່ແມ່ນຢູ່ໃນປອດຂອງທ່ານ) ທ່ານອາດຈະບໍ່ສາມາດທີ່ຈະລະບາດຕິດຕໍ່ເຊື້ອໂຣກນີ້ໄປສູ່ຜູ້ອື່ນໄດ້.

ເປັນສິ່ງສຳຄັນທີ່ສຸດ ທີ່ທ່ານ ຕ້ອງຮັບປະທານຢາໄປຈົນ ໝົດຕາມຄຳສັ່ງຂອງທ່ານໝໍ



ຫຼັງຈາກທ່ານຮັບປະທານຢາດີໂຣກປອດແຫ້ງ ໄປໄດ້ສອງສາມອາທິດ ທ່ານກໍເລີ່ມຈະຮູ້ສຶກດີຂື້ນ ແລະເມື່ອເຖິງເວລານັ້ນແລ້ວ ທ່ານກໍ່ບໍ່ສາມາດ ຈະແຜ່ລະບາດຕິດຕໍ່ເຊື້ອໂຣກນີ້ໄປໃສ່ຜູ້ອື່ນໄດ້ອີກແລ້ວ. ທ່ານອາດຈະກັບຄືນໄປທຳ ງານ, ຫຼື ປະຕິບັດວຽກງານແນວໃດກໍໄດ້. ແຕ່ສິ່ງສຳຄັນທີ່ສຸດທ່ານຕ້ອງກິນຢາດີໂຣກປອດແຫ້ງນັ້ນໄປເລື້ອຍໆ ຕາມຄຳສັ່ງ ຂອງທ່ານໝໍ ເພື່ອຈະໄດ້ຂ້າເຊື້ອໂຣກປອດແຫ້ງ ໃຫ້ໝົດໄປ ຈາກຮ່າງກາຍຂອງ ທ່ານ.